ວາລະສານ

# ກະສິກໍາ ແລະ ປ່າໄມ້

ປະຈໍາ ອາທິດວັນທີ 27 ຫາ 31 ພຶດສະພາ 2024



ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບການຢ້ຽມຢາມຂໍ່ານັບ ຂອງຫົວໜ້າສວນພຶກສາດ ສິບສອງປັນນາ

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້

# ທ່ານລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້ ຕ້ອນຮັບ ການຢ້ຽມຢາມຂໍ່ານັບຂອງຫົວໜ້າສວນພຶກສາສາດ ສິບສອງປັນນາ



ພາບ-ຂ່າວໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ໃນວັນທີ 27 ພຶດສະພາ 2024, ທີ່ກະຊວງ ກະສິກຳ ແລະ ປ່າໄມ້ ທ່ານ ຣສ ປອ ລິນຄຳ ດວງ ສະຫວັນ ໄດ້ຕ້ອນຮັບການເຂົ້າຢ້ຽມຢາມຂໍ່ານັບ ຂອງ ທ່ານ ສຈ ດຣ ຢ່າງ ໂຢປີງ ຫົວໜ້າສວນພຶກສາ ສາດສິບສອງປັນນາ ນັກວິຊາການລະດັບຊາດ ຊ່ຽວຊານເຂົ້າ ສະມາຊິກສະພາວິທະຍາສາດ ສປ ຈີນ ພ້ອມດ້ວຍຄະນະ ການພົບປະຄັ້ງແມ່ນເນື່ອງ ໃນໂອກາດການເດີນທາງມາເຂົ້າຮ່ວມກອງປະຊຸມ ສໍາມະນາ ວິຊາການ ນິເວດວິທະຍາ ແລະ ຄວາມ ຫຼາກຫຼາຍທາງດ້ານຊີວະນາໆພັນ ຢູ່ ສປປ ລາວ, ການພົບປະຄັ້ງນີ້ທ່ານຫົວໜ້າສວນພຶກສາສາດໄດ້ ລາຍງານກ່ຽວກັບການຮ່ວມມືລະຫວ່າງສວນພຶກ ສາສາດ ສິບສອງປັນນາ ແລະ ສະຖາບັນນິເວດ ວິທະຍາ ແລະ ເຕັກໂນໂລຊີ ແລະ ຫຼາຍວຽກທີ່ຕິດ ພັນກັບການຮ່ວມມືຂອງສວນພຶກສາສາດໃນ ສປປ ລາວ ໃນໄລຍະຜ່ານມາ ເຊັ່ນ ກ່ຽວກັບວຽກງານ ການຄົ້ນຄວ້າການສໍາຫຼວດຊະນິດພັນພືດ, ການ ສະໜັບສະໜູນທຶນແກ່ນັກຄົ້ນຄວ້າໜຸ່ມ, ເຊິ່ງທ່ານ ຍັງກ່າວວ່າໃນອະນາຄົດຂ້າງນີ້ທາງສວນພຶກສາ ສາດ ແລະ ຄະນະທີມງານຈະໄດ້ມີໂອກາດໄດ້ ຮ່ວມມືນໍາບັນດາພາກສ່ວນທີ່ນອນຂະແໜງກະສິ ກໍາຂອງ ສປປ ລາວ. ໃນໂອກາດການພົບປະຄັ້ງນີ້ ທ່ານລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ໄດ້ ກ່າວວ່າ ຕໍ່ກັບວຽກງານອາໂກຣໄບໂອຊີຕີ້ນີ້ ເປັນວຽກ ງານສໍາຄັນລະດັບຊາດນຶ່ງ ທີ່ຂະແໜງການເຮົາ ແມ່ນໄດ້ໃຫ້ຄວາມສໍາຄັນ ໂດຍອີງຕາມແຜນດໍາເນີນ ງານຂອງກະຊວງທີ່ກໍາລັງຈັດຕັ້ງຢູ່ໜຶ່ງໃນສີ່ແຜນ ງານບູລິມະສິດກໍ່ແມ່ນສຸມໃສ່ບັນຫາການຄຸ້ມຄອງ ປ່າໄມ້ແບບຍືນຍົງ ເຊິ່ງວຽກງານ ອາໂກຣໄບໂອຊີຕີ້ ນີ້ ກໍ່ແມ່ນນອນໃນແຜນງານດັ່ງກ່າວ ເພື່ອເຮັດແນວ ໃດເພື່ອສຸມໃສ່ການປົກປັກຮັກສາປ່າໄມ້ ແລະ ຊີວະ ນາໆພັນ ຊອກຫາວິທີທີ່ບໍ່ໃຫ້ຫຼຸດໜ້ອຍຖອຍລົງ ໃນ ຕໍ່ໜ້ານີ້ ຕໍ່ກັບວຽກງານການຮ່ວມມືສະເໜີໃຫ້ມີການ ສືບຕໍ່ ລົງເລິກຕາມສັນຍາການຮ່ວມມືການສຶກສາ ຄົ້ນຄວ້າໃຫ້ຫຼາຍຂຶ້ນເນື່ອງຈາກ ສປປ ລາວເຮົາຍັງ ມີທ່າແຮງຫຼາຍດ້ານ ພ້ອມທັງສະເໜີໃຫ້ຊ່ວຍຊຸກຍູ້ ດ້ານການສ້າງສວນພຶກສາສາດໃນລາວເພື່ອເປັນ ບ່ອນສຶກສາຮຽນຮູ້ໃນອະນາຄົດຕື່ມອີກ.





ຄະນະຮັບຜິດຊອບ:
ທ່ານ ສີປະໄພ ໄຊສີງຄາມ
ທ່ານ ສີສະຫວາດ ທອມດາລາ

ບັນນາທິການ:
ທ່ານ ກິດຊະນະ ພິມມະຈັນ
ທ່ານ ໄຊລາ ສິມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

ຈັດໜ້າອອກແບບໂດຍ:
ທ່ານ ນ. ສີອຳນອນ ໄຊຍະລາດ

ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່: ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;